ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ດຳເນີນກອງປະຊຸມ ຄົບຄະນະພັກ ແລະ ເຊື່ອມຊຶມມະຕິ 7



ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ລະຫວ່າງວັນທີ 5 – 6 ມິນາ 2019 ທີ່ສະໂມສອນສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງສະຫາຍສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ພ້ອມນີ້ ຍັງມີບັນດາສະຫາຍຄະນະພັກ ທຫລ, ຄະນະໜ່ວຍພັກ, ຄະນະພັກຮາກຖານ ແລະ ພະນັກງານຫຼັກແຫຼ່ງນຳພາອ້ອມຂ້າງອົງຄະນະພັກ ທຫລ ເຂົ້າຮ່ວມ.

ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ໃນຄັ້ງນີ້ ໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X; ເຜີຍແຜ່ມະຕິວ່າດ້ວຍການປັບປຸງຮາກຖານການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນລາວໃຫ້ເຂັ້ມແຂງ ແລະ ໜັກແໜ້ນ; ເຜີຍແຜ່ມະຕິວ່າດ້ວຍການເພີ່ມທະວີການນຳພາແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ - ການເງິນ ແລະ ສ້າງຄວາມເຂັ້ມແຂງຂອງການຄຸ້ມຄອງມະຫາພາກ. ນອກຈາກນີ້ ທີ່ປະຊຸມຍັງໄດ້ຜ່ານຮ່າງບົດສະຫຼູບຕີລາຄາການຊີ້ນຳ - ນຳພາຂອງຄະນະບໍລິຫານງານພັກ ທຫລ ປະຈຳປີ 2018 ແລະ ທິດທາງແຜນການປີ 2019.



ນອກນີ້ ຍັງໄດ້ແນະນຳໃນການປະກອບຄຳເຫັນທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງແຕ່ລະຮາກຖານພັກທີ່ຕິດພັນກັບ ມະຕິວ່າດ້ວຍການປັບປຸງຮາກຖານການເມືອງຂອງລະບອບປະຊາທິປະໄຕປະຊາຊົນລາວໃຫ້ເຂັ້ມແຂງ ແລະ ໜັກແໜ້ນ ແລະ ມະຕິວ່າດ້ວຍການເພີ່ມທະວີການນຳພາແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ - ການເງິນ ແລະ ສ້າງຄວາມເຂັ້ມແຂງຂອງການຄຸ້ມຄອງມະຫາພາກ; ການປະຕິບັດຄຳສັ່ງ ເລກທີ 09/ນຍ, ລົງວັນທີ 19/05/2017 ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດທີ່ຕິດພັນກັບຄວາມຮັບຜິດຊອບຂອງຮາກຖານພັກ ແລະ ກົມກອງຕົນໂດຍມີການປະກອບຄຳເຫັນຈາກບັນດາຄະນະພັກຮາກຖານມີ: ທະນາຄານນະໂຍບາຍ, ທະນາຄານພັດທະນາລາວ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານສົ່ງເສີມກະສິກຳ; ໜ່ວຍພັກຫ້ອງການ ທຫລ ແລະ ສາຂາ ທຫລ ພາກເໜືອແຂວງອຸດົມໄຊ, ສາຂາ ທຫລ ພາກໃຕ້ແຂວງຈຳປາສັກ.

ກອງປະຊຸມໃນຄັ້ງນີ້ ແມ່ນໄດ້ມີການຄົ້ນຄ້ວາລົງເລິກ ແລະ ແລກປ່ຽນທັດສະນະຄວາມຄິດເຫັນຢ່າງກົງໄປກົງມາ, ກ້າສະເໜີບັນຫາ ແລະ ສະເໜີວິທີທາງແກ້ໄຂທີ່ສ້າງສັນ, ເໝາະສົມ, ສອດຄ່ອງກັບສະພາບຈຸດພິເສດ ແລະ ບັນຫາຕົວຈິງ ບົນຈິດໃຈທີ່ເປັນເອກະພາບສູງຕໍ່ກັບເນື້ອໃນມະຕິ 7 ສະໄໝທີ X ຂອງພັກ ແລະ ພ້ອມນັ້ນ; ກໍ່ໄດ້ມີການຕີລາຄາບົດບາດການຊີ້ນຳ - ນຳພາຂອງຄະນະບໍລິຫານງານພັກໃນໜຶ່ງປີຜ່ານມາທີ່ສາມາດຍາດໄດ້ຜົນງານໃນຫຼາຍດ້ານ. ສັງລວມແລ້ວບັນດາເນື້ອໃນມະຕິດັ່ງກ່າວໄດ້ຊີ້ໃຫ້ເຫັນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດມະຫາພາກທີ່ສະສົມມາດົນສົມຄວນ ໂດຍເຫັນໄດ້ໃນການແກ້ໄຂບັນຫາທີ່ເປັນຈຸດອ່ອນ ແລະ ຂໍ້ຄົງຄ້າງໃນຜ່ານມາ ທີ່ຍັງບໍ່ທັນສ້າງໄດ້ການຫັນປ່ຽນທີ່ຈະແຈ້ງເທົ່າທີ່ຄວນ; ນອກຈາກນີ້, ຍັງຊີ້ໃຫ້ເຫັນເຖິງບັນຫາສາເຫດ ຊຶ່ງເປັນອັນພື້ນຖານ ແລະ ອັນເປັນຕົ້ນຕໍ ເພື່ອເປັນບ່ອນອີງໃນການວາງແກ້ໄຂ ພ້ອມທັງເປັນເອກະພາບກ່ຽວກັບບັນດາເນື້ອໃນທີ່ເປັນທັດສະນະ, ເປັນທິດທາງ ແລະ ມາດຕະການອັນເປັນພື້ນຖານ ເພື່ອດຳເນີນການແກ້ໄຂໃນຕໍ່ໜ້າ.

ສະຫາຍ ສອນໄຊ ສິດພະໄຊ ເລຂາຄະນະພັກ ທຫລ ໄດ້ຮຽກຮ້ອງໃຫ້ບັນດາສະຫາຍທີ່ເຂົ້າຮ່ວມກອງປະຊຸມຈົ່ງພ້ອມກັນ ຍົກສູງຄວາມຮັບຜິດຊອບ, ຄວາມເປັນແບບຢ່າງນຳໜ້າ, ຄວາມເດັດດ່ຽວກ້າຫານ ແລະ ມີຫົວຄິດປະດິດສ້າງໃນການຊີ້ນຳ - ນຳພາ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຈິດໃຈ ແລະ ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ໃຫ້ເປັນແຜນວຽກລະອຽດຢູ່ແຕ່ລະຮາກຖານພັກ ແລະ ກົມກອງຂອງຕົນ, ພ້ອມທັງຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໃນແຕ່ລະດ້ານດ້ວຍຄວາມຮັບຜິດຊອບສູງ ແລະ ພາຍຫຼັງສຳເລັດແລ້ວ, ຄະນະພັກທຸກຂັ້ນ ຕ້ອງຮີບຮ້ອນນຳເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ໄປຈັດຕັ້ງເຜີຍແຜ່ໃຫ້ຖັນແຖວສະມາຊິກພັກ - ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄດ້ກຳແໜ້ນຢ່າງເລິກເຊິ່ງ ເພື່ອໃຫ້ມີຄວາມເປັນເອກະພາບແລ້ວພ້ອມກັນຜັນຂະຫຍາຍສູ່ພາກປະຕິບັດຕົວຈິງໃຫ້ເປັນຮູບປະທຳ ດ້ວຍຈິດໃຈບຸກທະລຸ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ